**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 1904/ອຄ.ກຂອ

ນະຄອນຫຼວງ, ວັນທີ 30 ກັນຍາ 2011

# ແຈ້ງການ

**ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.**

**ເລື່ອງ: ຂັ້ນຕອນການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້.**

- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22/9/2008 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ,ປົກປັກຮັກສາໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມຄຳສັ່ງແນະນຳ ກ່ຽວກັບການລົບລ້າງສິ່ງກີດຂວາງ ທີ່ເປັນອຸປະສັກຕໍ່ການຈະລາຈອນສິນຄ້າ ເລກທີ 0395/ອຄ ລົງວັນທີ 25/2/2011.
- ອີງຕາມ ແຈ້ງການ ສະບັບເລກທີ 0826/ອຄ.ກຂອ ລົງວັນທີ 03 ພຶດສະພາ 2011 ກ່ຽວກັບການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກສິນຄ້າ ແບບອັດຕະໂນມັດ ແລະ ບໍ່ອັດຕະໂນມັດຂອງ ສປປລາວ.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງສົ່ງເສີມການຜະລິດ ແລະ ການເຄື່ອນໄຫວທຸລະກິດໄມ້ ໄດ້ຮັບການປະຕິບັດ ຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການດັ່ງນີ້:

## 1. ການອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້

### 1.1. ການອະນຸຍາດນຳເຂົ້າວັດຖຸດິບ(ໄມ້)

ໃນກໍລະນີທີ່ວັດຖຸດິບ (ໄມ້) ຢູ່ພາຍໃນປະເທດ ບໍ່ສາທາດຕອບສະໜອງ ຢ່າງພຽງພໍໃຫ້ແກ່ແຜນການຜະລິດ-ທຸລະກິດ ແລະ ການຕະຫຼາດຊົມໃຊ້ພາຍໃນ ແລະ ສົ່ງອອກ, ບໍລິສັດ/ໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີ ສາມາດສະເໜີ ຂໍນໍາເຂົ້າວັດຖຸດິບ(ໄມ້) ຈາກຕ່າງປະເທດໄດ້ ບົນພື້ນຖານມີເອກະສານຢັ້ງຢືນແຫຼ່ງທີ່ມາຂອງວັດຖຸດິບຈາກຕົ້ນທາງຢ່າງຄົບຖ້ວນ.

**1.2 ຂັ້ນຕອນການນໍາເຂົ້າວັດຖຸດິບ(ໄມ້)**

1.2.1 ບໍລິສັດ/ໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີທີ່ຕ້ອງການນໍາເຂົ້າວັດຖຸດິບ(ໄມ້) ຕ້ອງປະກອບເອກະສານເຊັ່ນ: ໃບສະເໜີ, ສໍາເນົາທະບຽນວິສາຫະກິດ ທີ່ອະນຸຍາດໃຫ້ດໍາເນີນທຸລະກິດໄມ້ ແລະ ທະບຽນອາກອນ, ໃບອະນຸຍາດສົ່ງອອກຈາກປະເທດສົ່ງອອກ, ໃບຢັ້ງຢືນແຫຼ່ງທີ່ມາຂອງໄມ້, ໃບແຈ້ງລາຄາສິນຄ້າທີ່ຈະນໍາເຂົ້າ, ສໍາເນົາບັນຊີໄມ້ ແລະ ສັນຍາຊື້-ຂາຍໄມ້ ມາຍື່ນຢູ່ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຄົ້ນຄວ້ານໍາສະເໜີ ຫ້ອງວ່າການລັດຖະບານ.

1.2.2 ພາຍຫຼັງລັດຖະບານພິຈາລະນາ ແລະ ຕົກລົງແລ້ວ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ຈະອອກໃບອະນຸຍາດນໍາເຂົ້າໃຫ້ຕາມລະບຽບການ.

**1.3 ຂັ້ນຕອນການອະນຸຍາດສົ່ງອອກໄມ້ທ່ອນ, ໄມ້ເລື່ອຍ(ແປຮູບ), ໄມ້ເຄິ່ງສໍາເລັດຮູບ, ຕໍໄມ້ ແລະ ປູດໄມ້**

1.3.1 ບໍລິສັດ/ໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີ ທີ່ຕ້ອງການສົ່ງອອກໄມ້ທ່ອນ, ໄມ້ເລື່ອຍ(ແປຮູບ), ໄມ້ເຄິ່ງສໍາເລັດຮູບ, ຕໍໄມ້ ແລະ ປູດໄມ້ຕ້ອງປະກອບເອກະສານ ເຊັ່ນ: ໃບສະເໜີ, ສໍາເນົາທະບຽນວິສາຫະກິດ ທີ່ອະນຸຍາດໃຫ້ດໍາເນີນທຸລະກິດໄມ້ ແລະ ທະບຽນອາກອນ, ໃບອະນຸຍາດສໍາເນົາບັນຊີໄມ້, ສັນຍາຊື້-ຂາຍໄມ້ ທີ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ ແລະ ໃບຮັບເງິນຄ່າພັນທະໄມ້ ມາຍື່ນຢູ່ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຄົ້ນຄວ້ານໍາສະເໜີ ຫ້ອງວ່າການລັດຖະບານ.

1.3.2 ໃນກໍລະນີລັດຖະບານພິຈາລະນາ ແລະ ຕົກລົງ ເປັນກໍລະນີພິເສດ ໃນການສົ່ງອອກໄມ້ທ່ອນ, ໄມ້ເລື່ອຍ(ແປຮູບ), ໄມ້ເຄິ່ງສໍາເລັດຮູບ, ຕໍໄມ້ ແລະ ປູດໄມ້ ອອກໄປຕ່າງປະເທດ: ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ຈະອອກອະນຸຍາດໃຫ້ແລ້ວນໍາສົ່ງ ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອອອກໃບຕິດຕາມການສົ່ງອອກ.

**1.4 ການສົ່ງອອກຜະລິດຕະພັນໄມ້**

ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບໄປຕ່າງປະເທດ ແມ່ນສາມາດສົ່ງອອກໄດ້ເລີຍ ໂດຍບໍ່ຈຳເປັນຂໍອະນຸຍາດ ກ່ອນການສົ່ງອອກ, ແຕ່ຜະລິດຕະພັນຕ້ອງຖືກຕ້ອງ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນຂໍ້ຕົກລົງຂອງ ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1415/ອຄ.ກອກ ລົງວັນທີ 28 ສິງຫາ 2008 ວ່າດ້ວຍ ຮູບແບບ ແລະ ຂະໜາດຜະລິດຕະພັນໄມ້.

**ເອກະສານປະກອບການອະນຸຍາດສົ່ງອອກ:**

- ສຳເນົາທະບຽນວິສາຫະກິດ ທີ່ອະນຸຍາດໃຫ້ດຳເນີນທຸລະກິດໄມ້ ແລະ ທະບຽນອາກອນ.
- ໃບແຈ້ງພາສີຂາອອກ (ຖ້າຜ່ານແຂວງອື່ນ ຕ້ອງປະກອບເອກະສານ ຕາມລະບຽບການ ຂອງຂະແໜງການເງິນ).
- ໃບແຈ້ງລາຄາ (Invoice).
- ໃບຫຸ້ມຫໍ່ (Packing List).
- ໃບຢັ້ງຢືນ ອ5.

**2. ຄວາມຮັບຜິດຊອບຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

2.1 ເປັນເຈົ້າການປະສານສົມທົບ ກັບຂະແໜງກະສິກຳ ແລະ ປ່າໄມ້ ເພື່ອກວດກາບັນຊີໄມ້ທ່ອນ, ຕໍໄມ້, ປູດໄມ້ ຢູ່ ສະໜາມ II ແລະ ຮັບເອົາໄມ້ຕົວຈິງ ຈາກຂະແໜງກະສິກຳ ແລະ ປ່າໄມ້ ໂດຍມີການລົງລາຍເຊັນມອບຮັບ ຢ່າງເປັນລາຍລັກອັກສອນ.

2.2 ເຮັດສັນຍາຊື້-ຂາຍໄມ້ທ່ອນ, ຕໍໄມ້, ປູດໄມ້ ກັບບັນດາບໍລິສັດ/ໂຮງງານປຸງແຕ່ງໄມ້ສຳເລັດຮູບ ທີ່ຜ່ານການດັດສົມ ແລະ ເປັນສະມາຊິກ ຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ ຫຼື/ແລະ ແຂວງ.

2.3 ຄຸ້ມຄອງ ແລະ ກວດກາບັນດາໂຮງເລື່ອຍ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ, ສາງເກັບມ້ຽນຜະລິດຕະພັນໄມ້ ເປັນພະລັງງານ ແລະ ສະຖານທີ່ອື່ນໆ ທີ່ເຫັນວ່າຈຳເປັນ ຕາມກົດໝາຍອຸດສາຫະກຳປຸງແຕ່ງ ໂດຍມີການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ.

2.4 ຄຸ້ມຄອງ ແລະ ປະສານ ກັບຂະແໜງກະສິກຳ ແລະ ປ່າໄມ້ ກວດກາສົ້ນເຂົ້າຂອງວັດຖຸດິບເພື່ອສະໜອງໃຫ້ແກ່ ການຜະລິດ ແລະ ສົ້ນອອກຂອງຜະລິດຕະພັນຢ່າງເຂັ້ມງວດ.

2.5 ຄຸ້ມຄອງ ແລະ ອອກໃບຕິດຕາມການສົ່ງອອກສິນຄ້າ ປະເພດໄມ້ທ່ອນ, ເຄິ່ງສຳເລັດຮູບ, ຕໍໄມ້ ແລະ ປູດໄມ້ ເພື່ອສົ່ງອອກຕ່າງປະເທດ.

**3. ກຳນົດເວລາສຳລັບການພິຈາລະນາຄຳຮ້ອງ**

ໃບຄຳຮ້ອງທີ່ຖືກຕ້ອງ ແລະ ຄົບຖ້ວນ ຈະໄດ້ຮັບການພິຈາລະນາ ໂດຍທັນທີ. ເວັ້ນເສຍແຕ່ບາງກໍລະນີ ທີ່ມີຄວາມຈຳເປັນຕ້ອງໄດ້ກວດກາຄືນ, ຢ່າງຊ້າບໍ່ເກີນ 30 (ສາມສິບ) ວັນ ລັດຖະການ, ນັບແຕ່ວັນທີໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**4. ອາຍຸການນຳໃຊ້ໃບອະນຸຍາດ ແລະ ການຂໍຕໍ່ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ**

4.1 ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ມີອາຍຸການນຳໃຊ້ 90 (ເກົ້າສິບ) ວັນ ແລະ ຈະໝົດອາຍຸການນຳໃຊ້ ໂດຍອັດຕະໂນມັດ ຖ້າວ່າກຳນົດເວລາດັ່ງກ່າວ ຫາກສິ້ນສຸດລົງ.

4.2 ໃນກໍລະນີທີ່ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ຫາກຖືກຕົກເຮ່ຍເສຍຫາຍ, ບໍ່ຖືກນຳໃຊ້ ຫຼື ຖືກນຳໃຊ້ແລ້ວ ແຕ່ປະຕິບັດຍັງບໍ່ທັນສຳເລັດ ພາຍໃນກຳນົດເວລາທີ່ລະບຸໄວ້ ຜູ້ຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸການນຳໃຊ້ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ໂດຍຄັດຕິດບົດລາຍງານ ຫຼື ໃບຢັ້ງຢືນ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ ຢູ່ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອລົບລ້າງ ໃບອະນຸຍາດນຳເຂົ້າ ສະບັບເກົ່າ ແລະ ອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກສະບັບໃໝ່.

4.3 ການຕໍ່ອາຍຸໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ແມ່ນສາມາດຕໍ່ໄດ້ ແລະ ມີກຳນົດເວລານຳໃຊ້ບໍ່ເກີນ 60 (ຫົກສິບ) ວັນ/ຄັ້ງ. ຖ້າບໍ່ສາມາດປະຕິບັດໄດ້ ຕາມກຳນົດທີ່ກ່າວມາຂ້າງເທິງ ກໍ່ຖືວ່າສະຫຼະສິດແບບອັດຕະໂນມັດ.

**5. ການກວດກາຕິດຕາມການເຄື່ອນຍ້າຍ ແລະ ສົ່ງອອກ**

ຂະແໜງອຸດສາຫະກຳ ແລະ ການຄ້າ ໂດຍເຈົ້າໜ້າທີ່ກວດກາການຄ້າ ເປັນເຈົ້າການໂດຍສົມທົບກັບຂະແໜງການກ່ຽວຂ້ອງ ຕິດຕາມການເຄື່ອນຍ້າຍ, ການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຢູ່ຕາມເສັ້ນທາງຂົນສົ່ງ, ໂຮງງານປຸງແຕ່ງໄມ້, ສາງເກັບມ້ຽນໄມ້ ແລະ ທຸກໆສະຖານທີ່ ທີ່ເຫັນວ່າມີຄວາມຈຳເປັນ. ຫາກມີແຫຼ່ງຂ່າວທີ່ເຊື່ອຖືໄດ້ ໃຫ້ສົມທົບຂະແໜງການກ່ຽວຂ້ອງ ດຳເນີນການກວດກາແບບສະເພາະໂດຍທັນທີ ແລະ ປະຕິບັດຕາມພາລະບົດບາດ ສິດອຳນາດຂອງຕົນຕາມລະບຽບກົດໝາຍ.

6. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ 1601/ອຄ.ກຂອ ລົງວັນທີ 26 ກັນຍາ 2008 ແລະ ບັນດາແຈ້ງການອື່ນໆທີ່ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ປະກາດໃຊ້ໄປກ່ອນໜ້ານີ້ ຫາກຂັດກັບແຈ້ງການສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ ວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

ນຳສົ່ງ:

- ຄະນະນຳ ກຊ ອຄ ''ເພື່ອຊາບ''
- ຫ້ອງວ່າການລັດຖະບານ ''ເພື່ອຊາບ''
- ອົງການກວດກາລັດຖະບານ ''ເພື່ອຊາບ''
- ກົມພາສີ, ກົມສ່ວຍສາອາກອນ, ກົມຊັບສິນຂອງລັດ, ກະຊວງການເງິນ ''ເພື່ອຊາບ''
- ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ''ເພື່ອຊາບ''
- ບັນດາກົມອ້ອມຂ້າງ ກະຊວງອຸດສາຫະກຳ ແລະ ການຄ້າ ''ເພື່ອຊາບ ແລະ ປະຕິບັດ''
- ຫ້ອງວ່າການແຂວງ, ນະຄອນຫຼວງ '' ເພື່ອຊາບ''
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ''ເພື່ອແຈ້ງໃຫ້ນັກທຸລະກິດຊາບ''
- ສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ ''ເພື່ອປະຕິບັດ''
- ສະມາຄົມເຟີນິເຈີລາວ ''ເພື່ອປະຕິບັດ''